# ການແຍກອອກ ແລະ ການກັກບໍລິເວນ

ເຈົ້າໜ້າທີ່ສາທາລະນະສຸກໄດ້ນຳໃຊ້ ການແຍກອອກ ແລະ ການກັກບໍລິເວນ ເພື່ອຄວບຄຸມພະຍາດຕິດຕໍ່ ບໍ່ໃຫ້ແຜ່ລະບາດ ໃນຊ່ວງໄລຍະຂອງການລະບາດຂອງພະຍາດຕິດຕໍ່, ດັ່ງເຊັ່ນ ພະຍາດຕິດຕໍ່ ຊາ “SARS” (ໂຣກລະບົບຫາຍໃຈຮຸນແຮງສາຫັດ), TB (ວັນນະໂລກ), ຫລື ພະຍາດຕິດຕໍ່ອື່ນໆ.

- **ການແຍກອອກ** ໃຊ້ສຳລັບຄົນ*ທີ່ເຈັບປ່ວຍ*
- **ການກັກບໍລິເວນ** ໃຊ້ສຳລັບຄົນທີ່*ອາດຈະ*ເຈັບປ່ວຍໄວ ເພາະວ່າໄດ້ສຳພັດກັບຄົນທີ່ມີເຊື້ອພະຍາດ.

## *ການແຍກອອກ*ແມ່ນຫຍັງ?

ການແຍກອອກ ໝາຍເຖິງ ການຮັກສາຄົນທີ່ປ່ວຍເປັນ ພະຍາດຕິດຕໍ່ ຫ່າງຈາກຄົນທີ່ມີສຸຂະພາບແຂງແຮງ.

ມີຫລາຍໆ ຄົນເລືອກທີ່ຈະແຍກໂຕເຂົາເຈົ້າເອງຢູ່ທີ່ເຮືອນ ໃນຂະນະທີ່ເຂົາເຈົ້າເຈັບປ່ວຍ ເພື່ອປົກປ້ອງສະມາຊິກໃນຄອບຄົວ ແລະ ຄົນອື່ນ. ຍົກຕົວຢ່າງ ການບໍ່ໃຫ້ລູກຫລານໄປໂຮງຮຽນ ໃນເວລາທີ່ເຂົາເຈົ້າປ່ວຍເປັນໂລກໝາກສຸກໝາກໃສ. ສຳລັບຄົນເຈັບທີ່ມີພະຍາດຕິດຕໍ່ ເຊັ່ນ TB ແລະ SARS, ທາງ ໂຮງໝໍ ຈະໄດ້ແຍກເຂົາເຈົ້າ ອອກຈາກຄົນເຈັບຄົນອື່ນໆ.

## ຂ້າພະເຈົ້າຈຳເປັນ*ຕ້ອງ*ໄດ້ຖືກແຍກອອກບໍ?

ແມ່ນແລ້ວ. ຖ້າຫາກເຈົ້າໜ້າທີ່ສາທາລະນະສຸກໄດ້ສັ່ງທ່ານ ໃຫ້ຢູ່ຫ່າງຈາກຄົນອື່ນ, ທ່ານຕ້ອງໄດ້ເຊື່ອຟັງ.

## ຈະເກີດຫຍັງຂຶ້ນ ຖ້າຫາກຂ້າພະເຈົ້າໄດ້ຖືກແຍກອອກ?

ທ່ານຈະໄດ້ຮັບການຮັກສາພະຍາບານໃນຂະນະທີ່ເຈັບປ່ວຍ. ອາດຈະໄດ້ຮັບການຮັກສາ ຢູ່ທີ່:

- ເຮືອນຂອງທ່ານເອງ
- ໂຮງໝໍ, ຫລື
- ສະຖານພະຍາບານອື່ນໆ.



ຄົນເຈັບທີ່ຖືກແຍກອອກນັ້ນ *ຕ້ອງ* ໄດ້ຢູ່ໃນເຂດທີ່ໄດ້ແຍກໃຫ້. ມີແຕ່ເຈົ້າໜ້າທີ່ໃຫ້ການຮັກສາພະຍາບານເທົ່ານັ້ນຈຶ່ງຈະອະນຸຍາດ ໃຫ້ເຂົ້າໄປໃນເຂດໄດ້.

## *ການກັກບໍລິເວນ*ແມ່ນຫຍັງ?

ການກັກບໍລິເວນ ແມ່ນການແຍກ ຄົນທີ່ໄດ້ຕິດຕໍ່ກັບຄົນເຈັບປ່ວຍ ໃຫ້ຫ່າງຈາກຄົນທີ່ບໍ່ໄດ້ເຈັບປ່ວຍ.

ການກັກບໍລິເວນໃຊ້ສຳລັບ ໄວ້ຕິດຕາມເບິ່ງຄົນທີ່ບໍ່ໄດ້ປ່ວຍເທື່ອ, ແຕ່ອາດຈະເຈັບປ່ວຍໃນບໍ່ຊ້າ ຫລືອາດ ແຜ່ພະຍາດໄປຫາຄົນອື່ນ.




## ຂ້າພະເຈົ້າຈຳ*ຕ້ອງ*ໄດ້ຖືກກັກບໍລິເວນບໍ?

ແມ່ນແລ້ວ. ຖ້າຫາກເຈົ້າໜ້າທີ່ສາທາລະນະສຸກ ຄິດວ່າທ່ານອາດໄດ້ ສຳພັດກັບພະຍາດຕິດຕໍ່, ເຈົ້າໜ້າທີ່ ສາມາດສັ່ງໃຫ້ທ່ານຢູ່ຫ່າງຈາກຄົນອື່ນໆ ໄດ້.

## ຈະເກີດຫຍັງຂຶ້ນ ຖ້າຫາກຂ້າພະເຈົ້າໄດ້ຖືກກັກບໍລິເວນ?

ເຈົ້າໜ້າທີ່ອາດຈະຮຽກຮ້ອງໃຫ້ທ່ານ:

- ຢູ່ທີ່ເຮືອນຂອງທ່ານເອງ
- ຢູ່ຫ່າງຈາກຄົນອື່ນໆ
- ໃຫ້ກວດກາອາການຂອງທ່ານເອງ, ແລະ
- ໂທຫາທ່ານໝໍ ຖ້າທ່ານຫາກມີອາການເຈັບປ່ວຍ.

## ການແຍກອອກ ແລະການກັກບໍລິເວນນີ້ ໄດ້ຊ່ວຍ ຮັກສາຄົນຈາກການເຈັບເປັນແທ້ ບໍ?

ແມ່ນແລ້ວ. ໃນສະຫະລັດອາເມລິກາ ປີ 2003, ການແຍກອອກ ແລະ ການກັກບໍລິເວນ ສາມາດຢຸດການແຜ່ລະບາດຂອງ ພະຍາດຕິດຕໍ່ ແລະພະຍາດແຫ່ງຄວາມຕາຍ SARS. ດັ່ງນັ້ນໄດ້ຊ່ວຍຮັກສາຄົນໃຫ້ມີສຸຂະພາບແຂງແຮງ ເຖິງແມ່ນວ່າ ຈະຍັງບໍ່ທັນມີວິທີການປິ່ນປົວ, ວັກແຊງ ແລະຢາພິເສດ ທີ່ສາມາດ ຮັກສາໄດ້ເທື່ອ.

## ສຳລັບຂໍ້ມູນເພີ່ມເຕີມຂໍໃຫ້ຕິດຕໍ່ ...

ໂທຫາ CDC (Centers for Disease Control)
ສຳລັບຂໍ້ມູນເປັນ ພາສາອັງກິດ:

800-CDC-INFO (800-232-4636)
888-232-6348 (TTY)

ຫລືເຂົ້າໄປ: www.bt.cdc.gov/ncidod
www.dhs.ca.gov/epo